## ກອງປະຊຸມວິຊາການ ເພື່ອປະກອບຄຳເຫັນໃສ່ຮ່າງນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ຄັ້ງ ວັນທີ 26 ກັນຍາ 2016 ທີ່ໂຮງແຮມ ວຽງຈັນພລາຊາ

1. ຄວາມຄືບໜ້າຂອງການສ້າງຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໄມ້ສິ້ນເຂົ້າ-ສິ້ນອອກໂຮງງານປຸງແຕ່ງໄມ້
2. ໂຄງສ້າງຂອງຮ່າງຂໍ້ຕົກລົງ
3. ວຽກງານໃນຕໍ່ໜ້າ

1

## 1. ຄວາມຄືບໜ້າ

- ທີມງານຂອງກົມອຸດສາຫະກຳ ແລະ ຫັດຖະກຳ ໄດ້ ສຶກສາສ້າງ ຮ່າງເອກະສານ ແຕ່ ທ້າຍປີ 2015.
- ຄະນະທີມງານຂອງກົມອຸດສາຫະກຳ ແລະ ຫັດຖະກຳ ໄດ້ສົມທົບກັບຄະນະທີມງານຂອງ Lao Pro-FLEGT ແລະ ຕົວແທນຈາກພາກສ່ວນທີ່ກ່ຽວຂ້ອງ ໄດ້ເລີ່ມສຶກສາສ້າງຮ່າງຂໍ້ຕົກລົງກ່ຽວກັບການຄຸ້ມຄອງໄມ້ສິ້ນເຂົ້າ-ສິ້ນອອກ ຂອງໂຮງງານປຸງແຕ່ງໄມ້ນີ້ ແຕ່ຕົ້ນປີ ( ເດືອນ ມີນາ) 2016 ເປັນຕົ້ນມາ ແລະ ຄາດຄະເນຈະໃຫ້ສຳເລັດແມ່ນໃນເດືອນ ກໍລະກົດ 2016, ແຕ່ມີການແກ່ຍາວມາຮອດປະຈຸບັນ ເນື່ອງຈາກວ່າ ມີວຽກງານຫຼາຍຢ່າງເຂົ້າມາ ໂດຍສະເພາະແມ່ນການເຂົ້າຮ່ວມການຈັດຕັ້ງປະຕິບັດວຽກງານຕາມຄຳສັ່ງເລກທີ 15/ນຍ ຂອງ ທ່ານນາຍົກລັດຖະມົນຕີ
- ຂະບວນການໃນການສ້າງ: ໄດ້ມີການປະຊຸມກັນ, ການປະສານງານທາງອີເລັກໂຕຣນິກລະຫວ່າງທີມງານຂອງທີມງານຢູ່ໃນປະເທດ ແລະ ຜູ້ຊ່ຽວຊານຢູ່ຕ່າງປະເທດ, ການປະຊຸມຄົ້ນຄວ້າ-ປະກອບຄຳເຫັນຢູ່ພາຍໃນຫຼາຍຄັ້ງ
- ຄັ້ງຫຼ້າສຸດ, ໃນລະຫວ່າງວັນທີ 21-23 ກັນຍາ 2016 ໄດ້ມີການປະຊຸມປະກອບຄຳເຫັນຂອງຕົວແທນຈາກພາກສ່ວນທີ່ກ່ຽວຂ້ອງ ຊຶ່ງໄດ້ມີຮ່າງເອກະສານສະບັບຫຼ້າສຸດແລ້ວ

2

## ການຄຸ້ມຄອງຕ່ອງໂສ້ການສະໜອງໄມ້ ໃນປ່າຜະລິດ




## 2. ໂຄງສ້າງຂອງຮ່າງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໄມ້ສິ້ນເຂົ້າ-ສິ້ນອອກຂອງໂຮງງານປຸງແຕ່ງໄມ້

ຮ່າງ: ຂໍ້ຕົກລົງໝວດທີ I: ບົດບັນຍັດທົ່ວໄປ ປະກອບມີ 4 ມາດຕາ (ມາດຕາ 1 ຈຸດປະສົງ, ມາດຕາ 2 ການຄຸ້ມຄອງໄມ້ສິ້ນເຂົ້າ-ສິ້ນອອກໂຮງງານປຸງແຕ່ງໄມ້, ມາດຕາ 3 ການອະທິບາຍຄາສັບ, ມາດຕາ 4 ຂອບເຂດການນໍາໃຊ້)

- ໝວດ ທີ II: ແຫຼ່ງທີ່ມາຂອງໄມ້ ມີ 4 ມາດຕາ ( ແຫຼ່ງທີ່ມາຂອງໄມ້, ໄມ້ເຂດປ່າຜະລິດ, ໄມ້ເຂດກໍ່ສ້າງພື້ນຖານໂຄງລ່າງ, ໄມ້ເຂດປູກ)
- ໝວດທີ III: ການຄຸ້ມຄອງໄມ້ສິ້ນເຂົ້າ, ການຜະລິດ ແລະ ໄມ້ສິ້ນອອກ ມີ 3 ມາດຕາ (ການຄຸ້ມຄອງສິ້ນເຂົ້າ, ການຄຸ້ມຄອງການຜະລິດ, ການຄຸ້ມຄອງໄມ້ສິ້ນອອກ)
- ໝວດທີ IV: ການບໍລິຫານຈັດການໄມ້ສິ້ນເຂົ້າ-ສິ້ນອອກ ມີ 1 ມາດຕາ: ຄວາມຈໍາເປັນອັນພື້ນຖານສໍາລັບໂຮງງານ
- ໝວດທີ V: ການຕິດຕາມລະບົບເອກະສານ, ການເຄື່ອນຍ້າຍຜະລິດຕະພັນໄມ້ ແລະ ແບບຟອມເອກະສານຕ່າງໆ ມີ 5 ມາດຕາ( ການເກັບຮັກສາເອກະສານ, ການເຄື່ອນຍ້າຍໄມ້ທ່ອນ ແລະ ຜະລິດຕະພັນໄມ້, ແບບຟອມຕ່າງໆ, ການນໍາໃຊ້ລະຫັດ, ໜ້າທີ່ຂອງເຈົ້າໜ້າທີ່ການຄ້າ)
- ໝວດທີ VI: ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການປັບໄໝຕໍ່ຜູ້ລະເມີດ ມີ 2 ມາດຕາ ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການປັບໄໝຕໍ່ຜູ້ລະເມີດ)
- ໝວດທີ VII: ບົດບັນຍັດສຸດທ້າຍ ມີ 2 ມາດຕາ (ການຈັດຕັ້ງປະຕິບັດ, ຜົນສັກສິດ)

## ບາງຈຸດທີ່ຕ້ອງເອົາໃຈໃສ່

1. ຮູບແບບ ແລະ ລັກສະນະຂອງເອກະສານນີ້ຕ້ອງມີຄວາມຖືກຕ້ອງ ແລະ ສອດຄ່ອງກັບຫຼັກການຂອງການສ້າງນິຕິກຳ ຂອງ ສປປລາວ
2. ຄຳສັບທີ່ສຳຄັນ, ການອະທິບາຍຄຳສັບ... ເຫັນຄວນໃຫ້ມີຄວາມສອດຄ່ອງ ແລະ ກົມກຽວກັບເນື້ອໃນ ຫຼື ຄວາມໝາຍ ທີ່ໄດ້ມີການອະທິບາຍ ຫຼື ແປຄວາມໝາຍຢູ່ໃນກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ

5

## 3. ວຽກງານໃນຕໍ່ໜ້າ

1. ປະຊຸມເປີດກວ້າງຄັ້ງສຸດທ້າຍເພື່ອປະກອບຄຳເຫັນຈາກພາກສ່ວນທີ່ກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດ ຈາກສູນກາງ ແລະ ທ້ອງຖິ່ນ, ຊຶ່ງຄາດຄະເນໃສ່ຕົ້ນເດືອນ ຕຸລາ 2016
2. ປັບປຸງຄືນຈາກຜົນຂອງກອງປະຊຸມເປີດກວ້າງ
3. ນຳສະເໜີຂັ້ນເທິງ ເພື່ອຂໍອະນຸມັດປະກາດໃຊ້ເປັນທາງການ

6

# Q & A

Thank you!!!!